# ນຳສະເໜີ ວຽກງານກຸ່ມ ແລະ ສະຫະກອນກະສິກຳ
# ໃນ ສປປ ລາວ

## ທີ່ ກອງປະຊຸມປຶກສາຫາລື ການສ້າງເຄື່ອຂ່າຍເຂົ້າ

ກົມພັດທະນາຊົນນະບົດ ແລະ ສະຫະກອນ
ພະແນກສົ່ງເສີມສະຫະກອນ
ທ່ານ ສົມບູນ  ວົງເພັດ 020 5682 9539

## ❖ ຫົວຂໍ້ ນຳສະເໜີ:

I. ນິຕິກຳ ກ່ຽວຂ້ອງກັບສ້າງຕັ້ງສະຫະກອນ;
II. ການສົ່ງເສີມ ແລະນະໂຍບາຍຕໍ່ສະຫະກອນຜະລິດກະສິກຳ;
III. ນິຍາມ ແລະ ຄວາມໝາຍຂອງກຸ່ມ ແລະ ສະຫະກອນ;
IV. ເຫດຜົນ ແລະ ຄວາມຈຳເປັນໃນການຈັດຕັ້ງສະຫະກອນ
V. ການສ້າງຕັ້ງກຸ່ມ;

## I. ນິຕິກຳ ກ່ຽວຂ້ອງກັບກຸ່ມ ແລະສະຫະກອນຜະລິດ ກະສິກຳ;

1) ດຳລັດ ວ່າດ້ວຍກຸ່ມ ແລະ ສະຫະກອນ, ເລກທີ 606/ລບ, 26/11/2020;

ມາດຕາ 64 ສິດ ແລະ ໜ້າທີ່ ກະຊວງ ກປ

5. ອອກຄຳສັ່ງ, ຂໍ້ຕົກລົງ ແລະ ຄຳແນະນຳ ກ່ຽວກັບວຽກງານກຸ່ມ, ເຄືອຂ່າຍ ແລະ ສະຫະກອນ;

1) ຄຳສັ່ງ ກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການນຳພາຊີ້ນຳ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊົນຊົນ, ສະບັບເລກທີ 097/ກມສພ,

ລົງວັນທີ 18 ກຸມພາ 2020;

3) ລັດຖະບານອອກດຳລັດ ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ, ສະບັບເລກທີ 348/ລບ; ລົງວັນທີ 16/11/2017;

4) ປີ 2023 – ແຜນສ້າງກົດໝາຍ ວ່າດ້ວຍສະຫະກອນ

## II. ການສົ່ງເສີມກຸ່ມ ແລະ ສະຫະກອນ

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການນຳໃຊ້ທີ່ດິນຂອງລັດ;
3. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
4. ການເຂົ້າເຖິງແຫຼ່ງທຶນ;
5. ນະໂຍບາຍດ້ານພາສີ ແລະ ອາກອນ;
6. ດ້ານວິຊາການ, ການໃຫ້ຄຳປຶກສາ ແລະ ພັດທະນາ;
7. ການເຂົ້າເຖິງ ແລະ ການຂະຫຍາຍຕະຫຼາດ;
8. ການນຳໃຊ້ ແລະ ການປົກປ້ອງຊັບສິນທາງປັນຍາ;
9. ການສະໜອງ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ.

# II. ການສົ່ງເສີມກຸ່ມ ແລະ ສະຫະກອນ (ຕໍ່)

## ມາດຕາ 59 ການສະເໜີ ແລະ ການໃຫ້ນະໂຍບາຍສົ່ງເສີມ

ກຸ່ມ ແລະ ສະຫະກອນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ຈົດທະບຽນ ຢ່າງຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ສາມາດຍື່ນຄຳຮ້ອງຕາມແບບພິມ ຕໍ່ຂະແໜງກະສິກຳ ແລະ ປ່າໄມ້ ເພື່ອຂໍຮັບນະໂຍບາຍສົ່ງເສີມ ຕາມທີ່ກຳນົດໄວ້ໃນມາດຕາ 49 ຂອງດ□າລັດສະບັບນີ້.

**ເອກະສານປະກອບຂໍຮັບນະໂຍບາຍສົ່ງເສີມ ມີດັ່ງນີ້:**

1. ໃບຄຳຮ້ອງຂໍຮັບນະໂຍບາຍສົ່ງເສີມຕາມແບບພິມ ທີ່ກະຊວງ ກປ ກຳນົດ;
2. ໃບອະນຸຍາດສ້າງຕັ້ງ ກຸ່ມ ແລະ ສະຫະກອນ;
3. ສຳລັບສະຫະກອນ ຕ້ອງມີໃບທະບຽນສະຫະກອນ.

**ພາຍຫຼັງໄດ້ຮັບເອກະສານຂໍຮັບນະໂຍບາຍສົ່ງເສີມແລ້ວ ຂະແໜງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ພິຈາລະນາໃຫ້ນະໂຍບາຍສົ່ງເສີມ.**

# III. ນິຍາມ ແລະ ຄວາມໝາຍຂອງກຸ່ມ ແລະ ສະຫະກອນ;

**"ກຸ່ມ"** ແມ່ນ ການຈັດຕັ້ງລວມໝູ່ຂອງປະຊາຊົນລາວທີ່ມີອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິ ການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ລະຫວ່າງ ສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານການຜະລິດ ແລະ/ຫຼື ການບໍລິການ;

**"ສະຫະກອນ"** ແມ່ນ ການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ປະກອບອາຊີບ ກະສິກຳ, ຫັດຖະກຳ, ຄ້າຂາຍ, ການບໍລິການ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານທຶນຮອນ, ປະສົບການ ແລະ ເຕັກນິກ ໃນການດຳເນີນທຸລະກິດ ການຜະລິດ, ການຄ້າ ຫຼື ການບໍລິການ.

## IV. ເຫດຜົນ ແລະຄວາມຈຳເປັນໃນການສ້າງຕັ້ງສະຫະກອນແບບໃໝ່;

❖ເພື່ອແກ້ໄຂບັນຫາຂອງຊາວກະສິກອນຜູ້ດ້ອຍໂອກາດ:

- ➢ຊື້ເພງ: ຊື້ອຸປະກອນ, ປັດໃຈການຜະລິດ, ອື່ນໆ;
- ➢ຂາຍຖືກ: ຜົນຜະລິດໄດ້ລາຄາຕໍ່າ ແລະ ລາຄາບໍ່ແນ່ນອນ
- ➢ການຕະຫຼາດ: ຜະລິດແລ້ວບໍ່ໄດ້ຂາຍ;
- ➢ທຶນ: ມີຫຼັກຊັບຄ້ຳປະກັນ, ດອກເບ້ຍສູງ;
- ➢ການແຂ່ງຂັນ;
- ➢ການເຊື່ອມໂຍງພາຍໃນ ແລະສາກົນ;
- ➢ການເຂົ້າເຖິງນະໂຍບາຍຕ່າງໆ ຂອງພາກລັດ;
- ➢ອື່ນໆ;

**ຜູ້ທີ່ຈະແກ້ໄຂບັນຫາທັງໝົດ ຕ້ອງມີຜູ້ບໍລິຫານຈັດການມາຊ່ວຍກໍ່ຄື ‘’ສະຫະກອນ”**

# V. ການສ້າງຕັ້ງກຸ່ມ;

1). ຂັ້ນຕອນກະກຽມ

- ມີສະມາຊິກຢ່າງໜ້ອຍ 5 ຄົນ (ຖ້າ10ຄົນຕ້ອງມີສະຖານທີ່ເຮັດວຽກ);
- ກົດລະບຽບ;
- ແຜນດຳເນີນງານ;

## 2) ຂັ້ນຕອນຈັດກອງປະຊຸມສ້າງຕັ້ງ:

ພິຈາລະນາຮັບຮອງເອົາ:

- ກົດລະບຽບ;
- ແຜນດຳເນີນງານຂອງກຸ່ມ;
- ເລືອກຕັ້ງຄະນະບໍລິຫານ ຊຸດທຳອິດ.

ກອງປະຊຸມຕ້ອງມີ ໃບລົງທະບຽນ ແລະ ເຮັດບົດບັນທຶກກອງປະຊຸມ ເພື່ອປະກອບເອກະສານຂໍສ້າງຕັ້ງ.

## 3) ສະເໜີສ້າງຕັ້ງນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ:

- ຄຳຮ້ອງຂໍສ້າງຕັ້ງ ຕາມແບບພິມ;
- ບັນຊີລາຍຊື່ສະມາຊິກ ແລະຊີວະປະຫວັດ ຄະນະບໍລິຫານ;
- ບົດບັນທຶກກອງປະຊຸມສ້າງຕັ້ງ;
- ກົດລະບຽບ;
- ໂຄງຮ່າງການຈັດຕັ້ງ;
- ແຜນດຳເນີນງານ;

**ການອະນຸຍາດສ້າງຕັ້ງກຸ່ມ:** ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງກຸ່ມ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ຫຼື ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ໃນກໍລະນີບໍ່ມີຫ້ອງການຢູ່ຂັ້ນເມືອງນັ້ນ ຕ້ອງຄົ້ນຄວ້າພິຈາລະນາ ເອກະສານຂໍສ້າງຕັ້ງກຸ່ມ ເພື່ອອອກໃບອະນຸຍາດ **<u>ພາຍໃນເວລາ ເຈັດ ວັນ ລັດຖະການ</u>**, ແລ້ວແຈ້ງໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຫຼື ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງໃນກໍລະນີບໍ່ມີຫ້ອງການຢູ່ຂັ້ນເມືອງນັ້ນ **<u>ພາຍໃນເວລາ ສາມ ວັນ ລັດຖະການ</u>** ເພື່ອຂຶ້ນບັນຊີກຸ່ມ (ໃນກໍລະນີປະຕິເສດການຂໍຮ້ອງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນເວລາ **ເຈັດ** ວັນ ລັດຖະການ). **<u>ໃບອະນຸຍາດສ້າງຕັ້ງກຸ່ມ ມີອາຍຸການນຳໃຊ້ ຕະຫຼອດໄລຍະການດຳເນີນກິດຈະການຂອງກຸ່ມ</u>**;

# VI. ການສ້າງຕັ້ງສະຫະກອນ;

## 1). ຂັ້ນຕອນກະກຽມ

- ມີສະມາຊິກຢ່າງໜ້ອຍ ເຈັດ ຄົນ (ສະມາຊິກ1ຄົນໄດ້ຮັບການຝຶກອົບຮົມ);
- ຄະນະລິເລີ່ມ (ປະສານພາກັບພາກສ່ວນ ກ່ຽວຂ້ອງ)
- ຫ້ອງການ;
- ກົດລະບຽບ;
- ທຶນ ແລະ ຊັບສິນ;
- ແຜນດຳເນີນງານ;
- ແຜນດຳເນີນທຸລະກິດຂອງສະຫະກອນ;

## 2) ຂັ້ນຕອນຈັດກອງປະຊຸມສ້າງຕັ້ງ:

ພິຈາລະນາຮັບຮອງເອົາ:

- ກົດລະບຽບ;
- ແຜນດຳເນີນງານຂອງສະຫະກອນ;
- ແຜນດຳເນີນທຸລະກິດຂອງສະຫະກອນ;
- ເລືອກຕັ້ງຄະນະບໍລິຫານ ຊຸດທຳອິດ.

ກອງປະຊຸມຕ້ອງມີ ໃບລົງທະບຽນ ແລະ ເຮັດບົດບັນທຶກກອງປະຊຸມ ເພື່ອປະກອບເອກະສານຂໍສ້າງຕັ້ງ.

## 3) ສະເໜີສ້າງຕັ້ງນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ:

- ຄຳຮ້ອງຂໍສ້າງຕັ້ງສະຫະກອນ ຕາມແບບພິມ ທີ່ຂະແໜງການກ່ຽວຂ້ອງກຳນົດ;
- ແຜນດຳເນີນງານຂອງສະຫະກອນ;
- ແຜນດຳເນີນທຸລະກິດຂອງສະຫະກອນ;
- ບັນຊີລາຍຊື່ສະມາຊິກ ພ້ອມດ້ວຍລາຍເຊັນຂອງແຕ່ລະຄົນ, ຈຳນວນຮຸ້ນ ແລະ ທຶນຈົດທະບຽນ ຂອງສະຫະກອນ;
- ໃບຢັ້ງຢືນທີ່ຕັ້ງຫ້ອງການຂອງສະຫະກອນ;
- ກົດລະບຽບຂອງສະຫະກອນ;
- ບົດບັນທຶກກອງປະຊຸມສ້າງຕັ້ງ;

ພາຍຫຼັງໄດ້ຮັບຄຳຮ້ອງຂໍສ້າງຕັ້ງສະຫະກອນ ຫ້ອງການ ກປເມືອງ ຕ້ອງດຳເນີນການຄົ້ນຄວ້າການຂໍສ້າງຕັ້ງສະຫະກອນ ແລະ ອອກໃບອະນຸຍາດສ້າງຕັ້ງ ພາຍໃນເວລາ ສິບຫ້າ ວັນລັດຖະການ. ໃນກໍລະນີປະຕິເສດການຮ້ອງຂໍ ຕ້ອງແຈ້ງຕອບເປັນລາຍລັກອັກສອນພ້ອມທັງເຫດຜົນພາຍໃນເວລາ **ເຈັດ** ວັນລັດຖະການ.

# 4) ສະເໜີ ຂໍຈົດທະບຽນສະຫະກອນ ນໍາຫ້ອງການ ອກ ເມືອງ

ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງແລ້ວ ສະຫະກອນ ຕ້ອງໄປແຈ້ງຂຶ້ນທະບຽນສະຫະກອນ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ພາຍໃນເວລາ **ສິບຫ້າ** ວັນລັດຖະການ ນັບແຕ່ວັນໄດ້ຮັບອະນຸມັດສ້າງຕັ້ງ;

ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕ້ອງພິຈາລະນາອອກໃບທະບຽນສະຫະກອນ ພາຍໃນເວລາ **ສາມ** ວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍຈົດທະບຽນສະຫະກອນເປັນຕົ້ນໄປ.

# VII. ສະຖິຕິກຸ່ມ ແລະ ສະຫະກອນ;

| ລດ | ຊື່ແຂວງ | ກຸ່ມຜະລິດກະສິກຳ | | | | | | | ສະຫະກອນ | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ລວມ | ປະເພດກຸ່ມ ທີ່ຮັບຮອງ | | | | | ລວມ | ກະສິກຳ | ສສງ | |
| | | | ປູກ | ລ້ຽງ | ປະມົງ | ປຸງແຕ່ງ | ບໍລິການ | | | | |
| 1 | ນຄຫຼວງວຽງຈັນ | **131** | 120 | 10 | | | 1 | **5** | 3 | 2 | |
| 2 | ວຽງຈັນ | **151** | 96 | 52 | 2 | 1 | | **4** | 1 | 3 | |
| 3 | ບໍລິຄຳໄຊ | **133** | 53 | 78 | | 2 | | **1** | 0 | 1 | |
| 4 | ໄຊສົມບູນ | **360** | 100 | 220 | | 5 | 35 | **0** | 0 | 0 | |
| 5 | ຊຽງຂວາງ | **122** | 28 | 94 | | | | **7** | 4 | 3 | |
| 6 | ຫຼວງພະບາງ | **90** | 10 | 80 | | | | **2** | | 2 | |
| 7 | ໄຊຍະບູລີ | **141** | 131 | 4 | | 3 | 3 | **1** | 1 | | |
| 8 | ຜົ້ງສາລີ | **267** | 117 | 145 | 4 | 1 | | **0** | | | |
| 9 | ອຸດົມໄຊ | **158** | 70 | 88 | | | | **0** | | | |
| 10 | ຫຼວງນ້ຳທາ | **129** | 19 | 110 | | | | **1** | 1 | | |
| 11 | ບໍ່ແກ້ວ | **46** | 23 | 23 | | | | **1** | 1 | | |
| 12 | ຫົວພັນ | **383** | 149 | 234 | | | | **2** | 1 | 1 | |
| 13 | ຄຳມ່ວນ | **125** | 119 | 3 | | 3 | | **3** | | 3 | |
| 14 | ສະຫວັນນະເຂດ | **562** | 346 | 214 | | | 2 | **2** | | 2 | |
| 15 | ສະລາວັນ | **16** | 16 | | | | | **1** | | 1 | |
| 16 | ເຊກອງ | **393** | 259 | 106 | 0 | 20 | 8 | **0** | 0 | 0 | |
| 17 | ອັດຕະປື | **157** | 77 | 71 | | 7 | 2 | **0** | 0 | 0 | |
| 18 | ຈຳປາສັກ | **0** | | | | | | **18** | 12 | 6 | |
| | **ລວມທັງໝົດ** | **3,364** | **1,733** | **1,532** | **6** | **42** | **51** | **48** | **24** | **24** | |

**ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ, ສັງລວມປີ 2019;**

| ລ/ດ | ປະເພດກຸ່ມ | ເຂດ | ກາງ | ຮຽນຮູ້ | ຈຳນວນກຸ່ມ |
|---|---|---|---|---|---|
| 1 | ປູກ | 32 | 50 | 626 | 708 |
| 2 | ລ້ຽງ | | | 776 | 776 |
| 3 | ປະມົງ | | | 35 | 35 |
| 4 | ປຸງແຕ່ງ | | | 5 | 5 |
| 5 | ບໍລິການ | | | 4 | 4 |
| | **ລວມທັງໝົດ:** | **32** | **50** | **1446** | **1528** |

ກົມສົ່ງເສີມກະສິກຳ ແລະ ສະຫະກອນ
ພະແນກສົ່ງເສີມການຜະລິດ ແລະ ທຸລະກິດກະສິກຳ

ເລກທີ 046 /ສປທ

# ສັງລວມຂໍ້ມູນກຸ່ມຜະລິດກະສິກຳ ໃນປີ 2019

| ລ/ດ | ແຂວງ | ຈ/ນ ເມືອງ | ຈ/ນ ບ້ານ | ກຸ່ມປູກ | ແຂງ | ກາງ | ຂຽນຊື່ | ກຸ່ມລ້ຽງ | ແຂງ | ກາງ | ຂຽນຊື່ | ກຸ່ມປະມົງ | ແຂງ | ກາງ | ຂຽນຊື່ | ກຸ່ມປຸງແຕ່ງ | ແຂງ | ກາງ | ຂຽນຊື່ | ກຸ່ມບໍລິການ | ແຂງ | ກາງ | ຂຽນຊື່ | ລວມຈ/ນກຸ່ມ | ຈ/ນສະມາຊິກ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 7 | 34 | 29 | 7 | 5 | 17 | 5 | 0 | 0 | 5 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 34 | 795 | |
| 2 | ຜົ້ງສາລີ | 5 | 179 | 114 | 0 | 0 | 114 | 148 | 0 | 0 | 148 | 4 | 0 | 0 | 4 | 0 | 0 | 0 | 0 | 1 | 0 | 0 | 1 | 267 | 5.414 | |
| 3 | ຫຼວງນ້ຳທາ | 5 | 49 | 9 | 0 | 0 | 9 | 80 | 0 | 0 | 80 | 2 | 0 | 0 | 2 | 0 | 0 | 0 | 0 | 0 | 0 | 0 | 0 | 91 | 1.346 | |
| 4 | ອຸດົມໄຊ | 7 | 83 | 56 | 0 | 0 | 56 | 58 | 0 | 0 | 58 | 4 | 0 | 0 | 4 | 0 | 0 | 0 | 0 | 1 | 0 | 0 | 1 | 119 | 2.549 | |
| 5 | ບໍ່ແກ້ວ | 1 | 192 | 15 | 0 | 0 | 15 | 14 | 0 | 0 | 14 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 29 | 453 | |
| 6 | ຫຼວງພະບາງ | 3 | 69 | 0 | 0 | 0 | 0 | 80 | 0 | 0 | 80 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 80 | 983 | |
| 7 | ຫົວພັນ | 7 | 120 | 28 | 0 | 0 | 28 | 191 | 0 | 0 | 191 | 22 | 0 | 0 | 22 | 0 | 0 | 0 | 0 | 0 | 0 | 0 | 0 | 241 | 2.729 | |
| 8 | ໄຊຍະບູລີ | 4 | 19 | 73 | 0 | 0 | 73 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 73 | 3.098 | |
| 9 | ຊຽງຂວາງ | 5 | 84 | 19 | 0 | 0 | 19 | 112 | 0 | 0 | 112 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 131 | 2.019 | |
| 10 | ວຽງຈັນ | 6 | 58 | 61 | 13 | 21 | 27 | 12 | 0 | 0 | 12 | 2 | 0 | 2 | 2 | 1 | 0 | 0 | 1 | 0 | 0 | 0 | 0 | 76 | 1.499 | |
| 11 | ບໍລິຄຳໄຊ | 2 | 13 | 23 | 0 | 0 | 23 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 23 | 945 | |
| 12 | ຄຳມ່ວນ | 6 | 41 | 72 | 0 | 0 | 72 | 1 | 0 | 0 | 1 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 73 | 5.242 | |
| 13 | ສະຫວັນນະເຂດ | 8 | 26 | 23 | 0 | 0 | 23 | 3 | 0 | 0 | 3 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 26 | 776 | |
| 14 | ສາລະວັນ | 1 | 16 | 16 | 0 | 0 | 16 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 16 | 492 | |
| 15 | ເຊກອງ | 1 | 14 | 59 | 0 | 0 | 59 | 31 | 0 | 0 | 31 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 90 | 1.350 | |
| 16 | ຈຳປາສັກ | 10 | 87 | 82 | 12 | 24 | 46 | 8 | 0 | 0 | 8 | 1 | 0 | 0 | 1 | 3 | 0 | 0 | 3 | 0 | 0 | 0 | 0 | 94 | 3.458 | |
| 17 | ອັດຕະປື | 3 | 65 | 29 | 0 | 0 | 29 | 33 | 0 | 0 | 33 | 0 | 0 | 0 | 0 | 1 | 0 | 0 | 1 | 2 | 0 | 0 | 2 | 65 | 1.623 | |
| 18 | ໄຊສົມບູນ | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | |
| | ລວມທັງໝົດ | 81 | 1.149 | 708 | 32 | 50 | 626 | 776 | 0 | 0 | 776 | 35 | 0 | 2 | 35 | 5 | 0 | 0 | 5 | 4 | 0 | 0 | 4 | 1.528 | 34.771 | |

ແຫຼ່ງຂໍ້ມູນ
1) ຂະແໜງ[illegible] ແລະ [illegible]
2) ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
3) [illegible]

ສັງລວມປະເພດກຸ່ມທັງໝົດ

| ລ/ດ | ຊື່ປະເພດ | ຈ/ນກຸ່ມ | ແຂງ | ກາງ | ຂຽນຊື່ |
|---|---|---|---|---|---|
| 1 | ກຸ່ມປູກ | 708 | 32 | 50 | 626 |
| 2 | ກຸ່ມລ້ຽງ | 776 | 0 | 0 | 776 |
| 3 | ກຸ່ມປະມົງ | 35 | 0 | 0 | 35 |
| 4 | ກຸ່ມປຸງແຕ່ງ | 5 | 0 | 0 | 5 |
| 5 | ກຸ່ມບໍລິການ | 4 | 0 | 0 | 4 |
| | ລວມ | 1.528 | 32 | 50 | 1.446 |

ຫົວໜ້າພະແນກສົ່ງເສີມການຜະລິດ ແລະ ທຸລະກິດກະສິກຳ

ສົມໄຊ ໄຊຍະວົງ

ຜູ້ສັງລວມ


16-20-0


คันเกียร์หลัก
โช้ค




ກະຊວງກະສິກຳ ແລະ ປ່າໄມ້
ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ
ສູນພັດທະນາກະສິກຳ
ແນວພັນເຂົ້າ
ຄວາມບໍລິສຸດສູງກວ່າ : 97%
ສິ່ງເຈືອປົນອື່ນໆ : ບໍ່ເກີນ 3%
ອັດຕາຄວາມງອກສູງກວ່າ : 80%
ຄວາມຊຸ່ມບໍ່ເກີນ : 14%
ຊື່ແນວພັນ HTDK
ລະດູການຜະລິດ 2020
ກ ສ ປ
DTEAP
Technical Extension and Agro-Processing
09
ນ້ຳໜັກສຸດທິ : 30 ກລ


ໂຄງການ
ຜະລິດເຂົ້າສະອາດເປັນມິດຕໍ່ສິ່ງແວດລ້ອມ
Climate Smart Rice Production Project
SGP
The GEF
Small Grants
Programme
MONRE
gef
UNDP









# ຂອບໃຈ